โທຫາພວກເຮົາໂດຍບໍ່ເສຍຄ່າ:

**1-800-511-2300**

ຫຼື ເຂົ້າໄປທີ່:

**dhcs.ca.gov/OPL**

ພາສາອັງກິດ, ສະເປນ, ອາຣັບ, ອາເມເນຍ, ກຳປູເຈຍ/ຂະເໝນ, ພາສາຈີນກວາງຕຸ້ງ, ພາສາຟາຊີ, ຮິນດູ, ມົ້ງ, ຍີ່ປຸ່ນ, ເກົາຫຼີ, ລາວ, ຈີນກາງ, ປັນຈາບ, ຣັດເຊຍ, ຕາກາລອກ, ໄທ, ແລະ ຫວຽດນາມ.
(ມີຕະຫຼອດ 24/7)

**ເພື່ອໃຫ້ໄດ້ຮັບການກວດໂດຍບໍ່ເສຍຄ່າ ເພື່ອກວດຫາມະເຮັງເຕົ້ານົມ ແລະ ປາກມົດລູກ, ທ່ານຕ້ອງ:**

- ອາໄສຢູ່ລັດ California.
- ເປັນຕາມຂໍ້ກຳນົດດ້ານອາຍຸ.
- ບໍ່ມີ ຫຼື ມີຈຳກັດເລື່ອງປະກັນສຸຂະພາບ.
- ມີປະກັນສຸຂະພາບທີ່ ຈ່າຍຮ່ວມ ຫຼື ຫຼຸດລາຄາທີ່ທ່ານບໍ່ມີຄວາມສາມາດຈ່າຍ,ຫຼື
- ມີລາຍໄດ້ຂອງຄອບຄົວຕໍ່າ.

**ຖະແຫຼງການກ່ຽວກັບການບໍ່ຈຳແນກ**

ພະແນກບໍລິການດູແລສຸຂະພາບຂອງລັດ California ປະຕິບັດຕາມກົດໝາຍວ່າດ້ວຍສິດທິພົນລະເມືອງຂອງລັດຖະບານກາງທີ່ນຳໃຊ້ ແລະ ບໍ່ມີການຈຳແນກດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມເປັນພິການ, ຫຼື ເພດ.

Language Assistance Services

Si habla español, usted puede conseguir ayuda para entender este documento, hablando con su proveedor de atención primaria del programa EWC o llamando al Contratista Regional de su condado. Los teléfonos del Contratista Regional se encuentran abajo. Esta asistencia lingüística es gratis.

如果您說漢語，我們可以幫助您瞭解這份文檔。請諮詢您所在地EWC附近診所或當地負責聯絡人。當地負責人電話見下文，他們會免費提供說明服務。

1-800-511-2300
dhcs.ca.gov/EWC

© 2021 Department of Health Care Services.
Lao

# ກວດມະເຮັງເຕົ້ານົມ ແລະ ມະເຮັງປາກມົດລູກໂດຍບໍ່ເສຍຄ່າ

## ໂດຍໂຄງການ EWC

## ໂຄງການແມ່ຍິງທຸກຄົນມີຄ່າ (Every Woman Counts - EWC) ແມ່ນຫຍັງ?

ໂຄງການ EWC ໃຫ້ບໍລິການກວດ ແລະ ຕິດຕາມມະເຮັງເຕົ້ານົມ ແລະ ມະເຮັງປາກມົດລູກໂດຍບໍ່ເສຍຄ່າ ແລະ ບໍລິການຕິດຕາມ. ນີ້ປະກອບມີການກວດ mammograms, Pap, ແລະ HPV ສໍາລັບບຸກຄົນທີ່ມີເງື່ອນໄຂໃນລັດ California. ຍ້ອນວ່າຄົນມີໂອກາດ ເປັນມະເຮັງເຕົ້ານົມ ແລະ ມະເຮັງປາກມົດລູກເພີ່ມຂຶ້ນ, ເຊິ່ງເປັນເຫດຜົນທີ່ພວກເຂົາຄວນໄດ້ຮັບການກວດຫາມະເຮັງເຕົ້ານົມ ແລະ ປາກມົດລູກເປັນປະຈໍາ.

## ເປັນຫຍັງທ່ານຈຶ່ງຕ້ອງກວດ mammogram?

- ຖ້າກວດພົບວ່າເປັນມະເຮັງເຕົ້ານົມກ່ອນ,ມັນກໍຈະໄດ້ຮັບການປິ່ນປົວງ່າຍກວ່າ.
- Mammograms ສາມາດຄົ້ນຫາມະເຮັງເຕົ້ານົມ ທີ່ມີຂະໜາດນ້ອຍເກີນກວ່າທ່ານ ຫຼື ທ່ານໝໍຂອງທ່ານຈະຮູ້ສຶກໄດ້.

## ຈະຕ້ອງກວດ mammogram ເລື້ອຍປານໃດ?

- ຖ້າທ່ານມີອາຍຸ 40 ຂຶ້ນໄປ, ທຸກໆ 1 ຫາ 2 ປີ.
- ລົມກັບທ່ານໝໍກ່ຽວກັບເລື່ອງທີ່ວ່າຈະໄປກວດເມື່ອໃດ ແລະ ໄປກວດເລື້ອຍປານໃດ.

**1-800-511-2300**
**dhcs.ca.gov/OPL**

## ໂຄງການ EWC ໃຫ້ໂດຍບໍ່ເສຍຄ່າເລື່ອງ:

- ກວດ mammograms
- ກວດ Pap
- ກວດ HPV
- ກວດລວມ Pap ແລະ HPV
- ຕິດຕາມການກວດ, ຖ້າຈໍາເປັນ

ລົມກັບທ່ານໝໍຂອງທ່ານກ່ຽວກັບວ່າທ່ານຄວນກວດຫາມະເຮັງເຕົ້ານົມແລະມະເຮັງປາກມົດລູກເລື້ອຍປານໃດ.

### ບາງສັນຍານເຕືອນ ແລະ/ຫຼື ອາການຂອງມະເຮັງເຕົ້ານົມປະກອບມີ:

- ກ້ອນ, ກ້ອນເນື້ອ,ຫຼື ບວມໃນເຕົ້ານົມ ຫຼື ກ້ອງແຂນ;
- ເຕົ້ານົມມີການປ່ຽນແປງຂະໜາດ ຫຼື ຮູບຮ່າງ;
- ມີການປ່ຽນແປງໂຄງສ້າງ ແລະ ສີຜິວ (ສີມ້ວງ, ປອກ, ແດງ, ຜິວໜັງເປັນເກັດ, ຫຼື ໜາ) ຂອງເຕົ້ານົມ ຫຼື ຫົວນົມ;
- ຫົວນົມຫຼຸບ ຫຼື ບານອອກ;
- ມີນ້ຳໝອງອອກທີ່ຫົວນົມ; ແລະ/ຫຼື
- ເຈັບເຕົ້ານົມ.

ຖ້າທ່ານມີສັນຍານເຕືອນ ຫຼື ອາການເຫຼົ່ານີ້, ໃຫ້ຕິດຕໍ່ທ່ານໝໍຂອງທ່ານໂດຍດ່ວນ.

ກະລຸນາຈໍາໄວ້ວ່າສັນຍານເຕືອນ ແລະ/ຫຼື ອາການເຫຼົ່ານີ້ອາດຈະເກີດຂຶ້ນກັບສະພາວະທີ່ອາດຈະບໍ່ແມ່ນມະເຮັງເຕົ້ານົມ.

## ເປັນຫຍັງທ່ານຈຶ່ງຄວນໄປກວດມະເຮັງປາກມົດລູກ?

- ການພົບເຫັນ ແລະ ປິ່ນປົວການປ່ຽນແປງຂອງເຊວກ່ອນສາມາດປ້ອງກັນມະເຮັງປາກມົດລູກໄດ້.
- ກວດ Pap ເພື່ອຊອກຫາການປ່ຽນແປງຂອງເຊວໃນປາກມົດລູກທີ່ອາດເປັນສາເຫດໃຫ້ເກີດເປັນມະເຮັງ.
- ກວດ HPV ເພື່ອຊອກຫາເຊື້ອໄວຣັດທີ່ສາມາດເຮັດໃຫ້ເຊວປ່ຽນໃນປາກມົດລູກ.

## ທ່ານຄວນໄປກວດມະເຮັງປາກມົດລູກເລື້ອຍປານໃດ?

- ບຸກຄົນທີ່ມີອາຍຸ 21 ປີຂຶ້ນໄປ ຄວນໄປກວດ Pap ທຸກໆ 3 ປີ.
- ບຸກຄົນທີ່ມີອາຍຸ 30 ປີຂຶ້ນໄປອາດ ເລືອກກວດ:
  - ກວດ HPV ທຸກໆ 5 ປີ, ຫຼື
  - ກວດລວມກັນທັງ Pap ແລະ HPV ທຸກໆ 5 ປີ, ຫຼື
  - ກວດ Pap ທຸກໆ 3 ປີ.

ລົມກັບແພດເພື່ອກວດສິ່ງທີ່ຈໍາເປັນສໍາລັບທ່ານ.